ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ 256 /ພກພ

ນະຄອນຫລວງວຽງຈັນ, ວັນທີ 28 AUG 2025

ຮຽນ: ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)
: ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ V ປີ 2025 (BOD V)

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ສຄຄຊ ເລກທີ: 27/ຄຄຊ, ລົງວັນທີ: 29/03/2022
- ອີງຕາມ: ລະບຽບ ວ່າດ້ວຍການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວສະບັບເລກທີ: 008/ຕລຊລ, ລົງວັນທີ: 27/09/2018

ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ V ປີ 2025 ເຊິ່ງໄດ້ຈັດຂຶ້ນໃນວັນທີ: 28/08/2025 ເວລາ 10:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມ ຄອນຕິເນັນໂທ ພລາຊ່າບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ ສີທອງ ພິມມະຈິດ ປະທານສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ພ້ອມດ້ວຍຜູ້ເຂົ້າຮ່ວມ 7 ທ່ານ ດັ່ງນີ້:

1. ທ່ານ ສີທອງ ພິມມະຈິດ ປະທານສະພາບໍລິຫານ
2. ທ່ານ ສີທາ ພິມມະຈິດ ຮອງປະທານສະພາບໍລິຫານ
3. ທ່ານ ແພງ ດວງເງິນ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ PCD
4. ທ່ານ ນັນທະລັດ ທິລະກຸນ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ
5. ທ່ານ ນາງໄຮທອງ ພິມມະຈິດ ສະມາຊິກສະພາບໍລິຫານ/ຮອງຜູ້ອຳນວຍການໃຫຍ່ຝ່າຍບັນຊີ-ການເງິນ,
6. ທ່ານ ພູມສະຫວັນ ສຸນັນທອງ ສະມາຊິກສະພາບໍລິຫານ/ຮອງຜູ້ອຳນວຍການຝ່າຍພັດທະນາທຸລະກິດ
7. ທ່ານ ພຸດທະເສນ ພິມມີໄຊ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີເປັນເອກະພາບກັນ ດັ່ງນີ້:

1. ເຫັນດີຮັບຮອງເອົາບົດລາຍງານການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2025.
2. ເຫັນດີຮັບຮອງເອົາບົດລາຍງານ ການເງິນ ປະຈຳ 6 ເດືອນຕົ້ນປີ 2025 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ທົບທວນແລ້ວ.

ກອງປະຊຸມໄດ້ອັດລົງໃນເວລາ 10:45 ໂມງ ຂອງວັນທີ: 28/08/2025.

ປະທານສະພາບໍລິຫານ
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company ນະຄອນ ຫຼວງ

ປອ ສີທອງ ພິມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມຄອນຕິເນັນໂທ ພລາຊາວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.
Tel: (856-21) 229696, Fax: (856-21)265394; E-mail: info@pcdlao.com; website: www.pcdlao.com